ກະຊວງພະລັງງານແລະ...
ຂາເຂົ້າ ເລກທີ ...1562...
ວັນທີ 19.3.2019

0555
25.3.19

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 467 /ຫສນຍ
ນະຄອນຫລວງວຽງຈັນ, ວັນທີ 18-3-2019

# ແຈ້ງການ

ຮຽນ : - ທ່ານ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ.
- ທ່ານ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່. ✓
- ທ່ານ ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.
- ທ່ານ ເຈົ້າຄອງນະຄອນຫລວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງໃນທົ່ວປະເທດ.

ເລື່ອງ : ທິດຊີ້ນຳກ່ຽວກັບການສະເໜີ ຂໍລົງທຶນໃໝ່ບັນດາໂຄງການໃນກິດຈະການໄຟຟ້າປະເພດຕ່າງໆ ໃນທົ່ວປະເທດ.

- ອີງຕາມອີງຕາມບົດບັນທຶກກອງປະຊຸມ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ສະບັບເລກທີ 02/ຄລທ.ສ, ລົງວັນທີ 25 ກຸມພາ 2019.
- ອີງຕາມທິດຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ໃນວັນທີ 06 ມີນາ 2019.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້ :

1. ເຫັນດີໃຫ້ໂຈະການຮັບ ແລະ ພິຈາລະນາ ຄຳຮ້ອງສະເໜີຂໍລົງທຶນໃໝ່ ໃນຂະແໜງພະລັງງານໄຟຟ້ານ້ຳຕົກ (ລວມທັງໂຄງການຂະໜາດ 5 ເມກາວັດ ລົງໄປ ທີ່ຂັ້ນແຂວງອະນຸຍາດ), ໂຄງການໄຟຟ້າຖ່ານຫີນ ແລະ ໂຄງການພະລັງງານທົດແທນ (ພະລັງງານແສງຕາເວັນ ແລະ ພະລັງງານລົມ) ເປັນເວລາ 2 ປີ (ຮອດວັນທີ 31 ທັນວາ 2020) ເພື່ອໃຫ້ລັດຖະບານ ໄດ້ກວດກາ, ຕີລາຄາ ແລະ ຈັດສັນຕະຫຼາດ ບັນດາໂຄງການພະລັງງານ ທີ່ລັດຖະບານ ໄດ້ອະນຸມັດຜ່ານມາ ເພື່ອວາງແຜນຍຸດທະສາດໃນການພັດທະນາພະລັງງານໄຟຟ້າ ຄືນໃໝ່, ດ້ານໜຶ່ງໂຄງການພະລັງງານທົດແທນເປັນໂຄງການທີ່ມີມູນຄ່າລົງທຶນສູງ ເຮັດໃຫ້ໂຄງການບໍ່ເປັນເສດຖະກິດ ແລະ ຕິດພັນກັບການນຳໃຊ້ທີ່ດິນເປັນຈຳນວນຫຼາຍ ເຮັດໃຫ້ເສຍໂອກາດໃນການພັດທະນາດ້ານອື່ນ, ຍົກເວັ້ນໂຄງການສະເໜີຂໍລົງທຶນໃໝ່ ຂະໜາດກາງ ແລະ ຂະໜາດໃຫຍ່ ທີ່ມີເປົ້າໝາຍນຳໃຊ້ສະເພາະຂອງຕົນ ຫຼື ມີຕະຫຼາດຈຳໜ່າຍໄຟຟ້າ ຢູ່ຕ່າງປະເທດ ທີ່ແນ່ນອນ, ຊຶ່ງລັດຖະບານ ອາດພິຈາລະນາເປັນແຕ່ລະກໍລະນີ ຕາມເງື່ອນໄຂຕົວຈິງ;

2. ໃນໄລຍະທີ່ໂຈະນີ້, ໃຫ້ກະຊວງແຜນການ ແລະ ການລົງທຶນ ປະສານສົມທົບກັບກະຊວງພະລັງງານ ແລະ ບໍ່ແຮ່, ບັນດາແຂວງທົ່ວປະເທດ, ລັດວິສາຫະກິດໄຟຟ້າລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ເກັບກຳຂໍ້ມູນໂຄງການພະລັງງານ ທີ່ລັດຖະບານ ໄດ້ອະນຸຍາດຜ່ານມາ ແລະ ກຳລັງຢູ່ໃນຂັ້ນຕອນ MOU, PDA ແລະ CA ເພື່ອຕີລາຄາ ແລະ ຈັດປະເພດບັນດາໂຄງການດັ່ງກ່າວ ໃຫ້ລະອຽດ, ໂຄງການໃດທີ່ຢູ່ໃນຂັ້ນຕອນ MOU, PDA ແລະ CA, ເຖິງວ່າມີຄວາມຄືບໜ້າດີ ແຕ່ຍັງບໍ່ທັນມີຕະຫຼາດຂາຍໄຟຟ້າ ກໍໃຫ້ໂຈະໄວ້ກ່ອນ ໂດຍທີ່ລັດຖະບານ ຈະຕໍ່ອາຍຸໂຄງການອອກໄປຕື່ມໃຫ້. ສ່ວນໂຄງການທີ່ບໍ່ມີຄວາມຄືບໜ້າ ທັງບໍ່ທັນມີສັນຍາຊື້-ຂາຍໄຟຟ້າ ແມ່ນໃຫ້ພິຈາລະນາໂຈະ ຫຼື ຍົກເລີກໂຄງການເລີຍ, ໂຄງການໃດທີ່ຢູ່ໃນຂັ້ນຕອນ CA ແລະ ໄດ້ເຊັນສັນຍາຊື້-ຂາຍໄຟຟ້າ ກັບລັດວິສາຫະກິດໄຟຟ້າລາວແລ້ວ. ແຕ່ລັດວິສາຫະກິດໄຟຟ້າລາວ ຍັງບໍ່ທັນມີລະບົບສາຍສົ່ງ ທີ ບໍ່ທັນມີປ່ອນຈຳໜ່າຍ ກໍໃຫ້ເຈລະຈາເລື່ອນໄປໄລຍະ

Scanned by CamScanner

3. ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນໃຈກາງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຮີບຮ້ອນສຳຫຼວດຄວາມຕ້ອງການຊົມໃຊ້ກະແສໄຟຟ້າ ປຸ໋ຍຢູເຣຍ ແລະ ສຶກສາເບິ່ງຄວາມຕ້ອງການໄຟຟ້າຂອງປະເທດໃກ້ຄຽງ ໃຫ້ລະອຽດ. ພ້ອມກັນນັ້ນ ກໍໃຫ້ຮີບຮ້ອນຄົ້ນຄວ້າປັບປຸງນະໂຍບາຍລາຄາໄຟຟ້າຄືນໃໝ່ ຕາມການຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ທີ່ລະບຸໃນແຈ້ງການສະບັບເລກທີ 417/ຫສນຍ, ລົງວັນທີ 11 ມີນາ 2019 ໃຫ້ສຳເລັດໂດຍໄວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

ບ່ອນສົ່ງ:

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ກະຊວງການເງິນ | 01 ສະບັບ |
| 4. ລັດວິສາຫະກິດໄຟຟ້າລາວ | 01 ສະບັບ |
| 5 ກສນ ຫສນຍ | 06 ສະບັບ |
| 6 ກົມກວດກາ, ຫສນຍ | 01 ສະບັບ |
| 7. ກົມເສດຖະກິດ-ສັງຄົມ, ຫສນຍ | 01 ສະບັບ |
| 8. ສຳເນົາ | 01 ສະບັບ |

Scanned by CamScanner